ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມສຳມະນາ ການກວດກາຕາມຄວາມສ່ຽງໂດຍລົງເລິກຄວາມສ່ຽງ ດ້ານສິນເຊື່ອ ສະພາບຄ່ອງ, ດ້ານຕະຫຼາດ, ດ້ານເຕັກໂນໂລຊີຂໍ້ມູນຂ່າວສານ




ໃນວັນທີ 23 ຫາ 24 ສິງຫາ 2023 ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມສຳມະນາ ຫົວຂໍ້: ການກວດກາຕາມຄວາມສ່ຽງ ໂດຍລົງເລິກຄວາມສ່ຽງ ດ້ານສິນເຊື່ອ, ສະພາບຄ່ອງ, ດ້ານຕະຫຼາດ, ດ້ານ ເຕັກໂນໂລຊີຂໍ້ມູນຂ່າວສານ (Onsite Examination: Focus on Liquidity Risk, Market Risk, Credit Risk, Cyber Security and IT Risk Management) ຂຶ້ນ ໂດຍການໃຫ້ກຽດເປັນປະທານຂອງທ່ານ ອາລຸນ ບຸນຍົງ ຫົວໜ້າກົມຄຸ້ມຄອງທະນຄານທຸລະກິດ, ມີຄະນະຊ່ຽວຊານຈາກທະນາຄານພັດທະນາອາຊີ (ADB) ແລະ ພະນັກງານວິຊາການພາຍໃນ ທຫລ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງກອງປະຊຸມສຳມະນາໃນຄັ້ງນີ້, ເພື່ອເປັນການຍົກລະດັບຄວາມຮູ້ກ່ຽວກັບວຽກງານກວດກາຕາມຄວາມສ່ຽງ ທັງເປັນການແລກປ່ຽນບົດຮຽນ ແລະ ປະສົບການໃນການຈັດຕັ້ງປະຕິບັດຕົວຈິງກັບຊ່ຽວຊານ ແລະ ຜູ້ຄຸ້ມຄອງທະນາຄານຕົວຈິງ ທີ່ມີປະສົບການຈາກທະນາຄານພັດທະນາອາຊີ ແລະ ຈາກທະນາຄານກາງປະເທດ ຍີ່ປຸ່ນ, ໄທ, ມາເລເຊຍ ແລະ ອິນໂດເນເຊຍ, ຊຶ່ງການຈັດສຳມະນາດັ່ງກ່າວຖືເປັນໂຄງການໜຶ່ງທີ່ສຳຄັນ ແລະ ເປັນບຸລິມະສິດ ໃນຂອບການສ້າງຂີດຄວາມສາມາດໃຫ້ແກ່ຜູ້ຄຸ້ມຄອງທະນາຄານ ທີ່ໄດ້ຮັບການສະໜັບສະໜູນຈາກທະນາຄານພັດທະອາຊີ

ເພື່ອຍົກລະດັບຄວາມຮູ້-ຄວາມສາມາດ ໃຫ້ແກ່ຜູ້ຄຸ້ມຄອງກວດກາເບື້ອງ ທຫລ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດທຽບເທົ່າກັບສາກົນ.

ກອງປະຊຸມສຳມະນາດັ່ງກ່າວ ແມ່ນໄດ້ດຳເນີນມາເປັນເວລາສອງວັນ ທີ່ເຕັມໄປດ້ວຍບັນຍາກາດອັນຟົດຟື້ນ ດ້ວຍການປະກອບຄຳຄິດເຫັນ ຄຳເຫັນ ແລະ ແລກປ່ຽນບົດຮຽນກັນ ແລະ ຖາມຕອບຂອງນັກສຳມະນາກອນ ກອງປະຊຸມສຳມະນາ ໄດ້ປິດລົງດ້ວຍຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.






**ຂ່າວ-ພາບ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ**

*ຢູ່ເມືອງລາວໃຊ້ເງິນກີບລາວ*